# ບົດທີ 16

# ຄຳກ່າວຂອງຊະເຕຟາໂນ ເລື່ອງປະຫວັດໃນພະຄຳພີເດີມ




*ມີຫຼາຍຄົນທີ່ຫຼົງທາງຜິດໃນເມື່ອເຂົາຈະອ່ານພະຄຳພີເດີມ. ເຊັ່ນດຽວກັນກັບຄົນທີ່ຫຼົງທາງໃນເມືອງເພາະມີເສັ້ນທາງ ຫຼາຍໂພດ ມີບາງຄົນທີ່ບໍ່ຢາກເປີດອ່ານພະຄຳພີເດີມ ເພາະມີພະທຳ ແລະຜູ້ບັນທຶກມີຫຼາຍໃນພະຄຳພີເດີມ. ພະຄຳພີປົກດຳ ສະບັບ 1979 ພະຄຳພີເດີມຍັງບໍ່ຄົບຖ້ວນເທື່ອ ໃນໜ້າ (8) ມີລາຍຊື່ການຄັດເລືອກພະຄຳພີເດີມ.*

**1** ໃນບົດທີ 15 ເຮົາຮຽນແລ້ວກ່ຽວກັບ ການຈັດຕັ້ງ 7 ຄົນເປັນຜູ້ດູແລສິ່ງຂອງໃນຄຼິດສະຕະຈັກ.

ກ. ພວກທີ່ປາກພາສາກະລີກຈົ່ມເລື່ອງຫຍັງ? ______________________

ຂ. ພວກຢິວທີ່ປາກພາສາກະລີກເກີດຢູ່ໃສ? ______________________

ຄ. ພວກໃດບໍ່ຢາກຮັບພາລະໃນການກິນແລະການດື່ມ? ________________

ງ. ພາລະສຳຄັນຂອງພວກສາວົກຄືຫຍັງ? ______________________

ຈ. ຄຼິດສະຕະຈັກນັ້ນຈັດຈັກຄົນໄວ້ໃຫ້ເປັນຜູ້ດູແລດ້ານສິ່ງຂອງ? ____________

ສ. ຊະເຕຟາໂນເປັນຜູ້ດູແລ ຫຼືເປັນອັກຄະສາວົກ? ______________________

**2** ໃຫ້ອ່ານ ກຈກ 6:8-15 ແລ້ວຕອບຄຳຖາມຕໍ່ໄປນີ້:

ກ. ໃນຂໍ້ 8 ຊະເຕຟາໂນເຮັດຫຍັງ? ________________________________

ຂ. ໃນຂໍ້ 12 ເຂົາເຮັດຫຍັງກັບຊະເຕຟາໂນ? ________________________________

ຄ. ສານນັ້ນເປັນສານສາດສະໜາ ຫຼືຂອງລັດ? ________________________________

ງ. ຫົວໜ້າສານນັ້ນຄືໃຜ? ________________________________

ຈ. ໃນ ກຈກ 6:13 ພະຍານບໍ່ຈິງກ່າວຫາວ່າ ຊະເຕຟາໂນກ່າວຕໍ່ສູ້ບ່ອນໃດ? __________

ສ. ແລະຕໍ່ສູ້ຫຍັງອີກ? ________________________________

ຊ. ໃນຂໍ້ 14 ຄຳວ່າ “ທຳລາຍສະຖານທີ່ນີ້” ອ້າງເຖິງສະຖານທີ່ໃດ? ________________

ຍ. ແລະຄຳວ່າ “ປ່ຽນທຳນຽມທີ່ໂມເຊໃຫ້” ອ້າງເຖິງກົດໃດ? ________________

**3** ຊະເຕຟາໂນຮັບໜ້າທີ່ໃດໃນຄຼິດສະຕະຈັກ? ________________________________

**4** ເຂົາກ່າວຫາວ່າ ຊະເຕຟາໂນເວົ້າຄວາມຕໍ່ສູ້ສອງຢ່າງໃດ?

ກ. ________________________________

ຂ. ________________________________

**5** ທີ່ຈິງເຂົາກ່າວອ້າງຜິດແລະເຂົ້າໃຈຜິດເລື່ອງຄວາມຂອງພະເຢຊູ ໃນພະທຳໂຢຮັນ 2:19-22.

ກ. ພະເຢຊູກ່າວເລື່ອງພະວິຫານໃດ? ________________________________

ຂ. ການທຳລາຍແລະສ້າງພະວິຫານຄືນໃນສາມວັນອ້າງເຖິງເຫດການໃດ?

________________________ ແລະ ________________________

**6** ໃຫ້ອ່ານມັດທາຍ 26:61 ເມື່ອພະເຢຊູຢູ່ຕໍ່ໜ້າສານ ພະຍານຕົວະແລະບິດເບືອນຄວາມຂອງ ພະເຢຊູ. ຕາມ ຄວາມຕົ ວະຂອງພະຍານນັ້ນວ່າ ພະເຢຊູຈະທຳລາຍພະວິຫານໃດ? (ເລືອກ)

ກ. ______ ພະກາຍຂອງພະອົງ

ຂ. ______ ພະວິຫານໃນກຸງເຢລູຊາເລັມ

ຄ. ______ ພະວິຫານຂອງຊາດຊາມາເລຍຢູ່ພູກາລິຊິມ

**7** ໃນກິດຈະການບົດ 6 ມີພະຍານບໍຈິງທີ່ມາບິດເບືອນຄວາມຂອງຊະເຕຟາໂນເຊັ່ນດຽວກັນ. ເຂົາກ່າວຫາວ່າ ຊະເຕ ຟາໂນກ່າວຄຳຫຍາບຊ້າ. (ຕື່ມຄວາມຂາດ)

ກ. ຕໍ່ໃຜ? ________________________________

ຂ. ຕໍ່ສະຖານທີ່ໃດ? ________________________________

**8** ຊະເຕຟາໂນຮັບພາລະໃດໃນທີ່ປະຊຸມ? ________________________________

**9** ຊະເຕຟາໂນຕອບເຂົາແຕ່ບໍ່ໄດ້ຕອບໂດຍກົງ. ເພິ່ນຍົກເລື່ອງຕ່າງ ໆ ຈາກປະຫວັດຊາດຢິວມາ ເປັນຄວາມແກ້ຄະດີ. ເຮົາຈະເອົາຄວາມແກ້ຄະດີຂອງຊະເຕຟາໂນເປັນມູນຖານສະຫລູບເລື່ອງ ປະຫວັດຊາດຢິວໃນສະໄໝພະຄຳພີເດີມ. ໃຫ້ອ່ານ ກຈກ 7:1-16

ກ. ຊະເຕຟາໂນກ່າວເລື່ອງໃຜໃນ ກຈກ 7:1-7? ________________________________

ຂ. ລູກຂອງອັບລາຮາມຊື່ຫຍັງ? (ຂໍ້ 8) ________________________________

ຄ. ລູກຂອງອີຊາກຊື່ຫຍັງ? ________________________________

ງ. ພະເຈົ້າໃສ່ຊື່ໃໝ່ໃຫ້ຫຼານຂອງອັບລາຮາມ ໃນປະຖົມມະການ 32:28 ມີຊື່ຫຍັງອີກ?

________________________________

ຈ. ອັບລາຮາມມີເຫຼນ 12 ຄົນ. ໃນ 12 ຄົນນັ້ນຄົນໃດມີຊື່ສຽງກວ່າໝູ່? (ຂໍ້ 9) _________

ໃຫ້ທ່ານເປີດເບິ່ງຕາຕະລາງເລື່ອງ "ປະຫວັດໃນສະໄໝພະຄຳພີເດີມ" ແລ້ວຂຽນຊື່ຂອງ 4 ຄົນນັ້ນ (ອັບລາຮາມ, ອີຊາກ, ຢາໂຄບ, ແລະໂຢເຊັບ) ໃນບ່ອນຫວ່າງ ລຸ່ມ "ຄົນສຳຄັນ" ຂ້າງ ເລກ 1. ໃຫ້ຂີດເສັ້ນກ້ອງຊື່ຂອງອັບລາຮາມ ເພື່ອສະແດງວ່າ ເພິ່ນເປັນເອກໃນຄອບຄົວ.

## ປະຫວັດໃນສະໄໝພະຄຳພີເດີມ

| | ຈາກຂໍ້ໃດໃນ ກຈກ ບົດ 7 | ຍຸກສະໄໝໃດ | ຄົນສຳຄັນ | ປີໃດ | ສະຖານທີ | ຈາກພະທຳໃດໃນພະຄຳພີເດີມ |
|---|---|---|---|---|---|---|
| 1. | | | | | | |
| 2. | | | | | | |
| 3. | | | | | | |
| 4. | | | | | | |
| 5. | | | | | | |
| 6. | | | | | | |

**10** ໃນ  ກຈກ 7:8-9 ເຫັນວ່າ ຜູ້ບັນທຶກພະທຳກິດຈະການ ອ້າງເຖິງລູກທັງມວນຂອງຢາໂຄບດ້ວຍ ໃຊ້ຄຳໃດ? ______________________________

**11** ຄຳວ່າ "ບັນພະບຸລຸດ" ນັ້ນ ອ້າງເຖິງຫົວໜ້າຄອບຄົວ ຫຼື ຫົວໜ້າຕະກຸນ. ຄຳວ່າ "ບັນພະບຸລຸດ" ໃນພະຄຳພີເດີມ ຮວມ ທັງອັບລາຮາມ ອີຊາກ ແລະພວກເຫຼນຂອງອັບລາຮາມທັງ 12 ຄົນຢູ່ ນຳ ເພາະເຫດນັ້ນ ເຮົາຈະຕິດຊື່ ຂອງຍຸກ ສະໄໝນັ້ນຕາມ.

ຍຸກສະໄໝນັ້ນຄືຍຸກໃດ? ______________________________

| |
|---|
| ໃຫ້ທ່ານຂຽນຄຳວ່າ "ບັນພະບຸລຸດ" ໃສ່ຫ້ອງໃຕ້ຄຳ "ຍຸກສະໄໝ" ຂ້າງ ເລກ 1.<br>ແລະໃນຫ້ອງລຸ່ມ "ຂໍ້ໃດໃນ ກຈກ ບົດ 7" ໃຫ້ຂຽນ "ຂໍ້ 1-16". |

**12** ໃຫ້ທ່ານສັງເກດເບິ່ງ ຂໍ້ອ້າງລຸ່ມໜ້າ ກຈກ 7:1-16. ຂໍ້ອ້າງເຫຼົ່ານັ້ນ ອ້າງເຖິງພະທຳໃດໃນພະ ຄຳພີເດີມ? ______________________________

| |
|---|
| ດັ່ງນັ້ນ ໃຫ້ທ່ານຂຽນຄຳວ່າ "ປະຖົມມະການ" ໃສ່ໃນຫ້ອງຂ້າງຂວາສຸດ ຂ້າງເລກ 1. |

**13** ອັບລາຮາມຢູ່ກ່ອນພະເຢຊູຈັກປີ? ______________________________

| |
|---|
| ໃຫ້ຂຽນ "2000 ກຄສ" ໃນຫ້ອງຂ້າງເລກ 1 ລຸ່ມ "ປີໃດ" |

**14** ໃຫ້ອ່ານ ກຈກ 7:4 ແລະ 7:9 ແລ້ວເປີດເບິ່ງແຜນທີ່ພາກຕາເວັນອອກກາງຢູ່ໜ້າຕໍ່ໄປນີ້.

ກ. ຫຼັງຈາກອອກຈາກແຜ່ນດິນຂອງຊາວຂາລະເດຍ ອັບລາຮາມໄປເມືອງໃດ?

______________________ ອັກສອນໃດໃນແຜນທີ່? ____________

ຂ. "ແຜ່ນດິນທີ່ພວກທ່ານອາໄສຢູ່ທຸກວັນນີ້" ທີ່ຊະເຕຟາໂນກ່າວແກ້ຕົວນັ້ນ ຄືປະເທດໃດ? (ບໍ່ມີຂຽນໃນແຜນທີ່ ເພາະທ່ານຮູ້ດີແລ້ວ)

______________________ ອັກສອນໃດ? ____________

ຄ. ໃນ ກຈກ 7:9 ພວກອ້າຍຂອງໂຢເຊັບຂາຍເພິ່ນໄປຍັງປະເທດໃດ?

______________________ ອັກສອນໃດ? ____________

## ພາກຕາເວັນອອກກ່າງ



ໃຫ້ທ່ານຂຽນຄຳ "ຂາລານ" "ປາແລັດສະຕິນ" ແລະ "ເອຢິບ" ໃສ່ໄວ້ໃນຕາຕະລາງ ຫ້ອງຂ້າງຂວາຈາກ ເລກ 1 ລຸ່ມ ສະຖານທີ່.

**15** ທ່ານບໍ່ຕ້ອງຈື່ທຸກປະການໃນຕາຕະລາງນັ້ນ ແຕ່ຢາກໃຫ້ຈື່ 3 ຂໍ້ໃນທຸກສະໄໝນັ້ນຄື:

- ຍຸກສະໄໝ
- ຄົນສຳຄັນ
- ປີ



ກ. ຍຸກສະໄໝທີ 1 ນັ້ນເປັນສະໄໝໃດ? ______________

ຂ. ໃຜເປັນຄົນສຳຄັນ? ___________________________

_________________________________________

ຄ. ຖືກກັບປີໃດ? (ກະປະມານ) _____________________

**16** ໃຫ້ກັບໄປອ່ານຈາກ ກິດຈະການບົດທີ 7 ອີກ ເລື່ອງຍຸກສະໄໝທີ ສອງທີ່ຊະເຕຟາໂນຍົກມາກ່າວຈາກພະຄຳພີເດີມ.
ຍຸກນັ້ນຢູ່ໃນຂໍ້ 17-45.

ກ. ຄົນສຳຄັນໃນສະໄໝນັ້ນຄືໃຜ? _______________________________________

ຂ. ປະມານປີໃດ? ___________________________________________________

ໃຫ້ທ່ານຂຽນຂ້າງເສັ້ນ ເລກ 2 ດັ່ງຕໍ່ໄປນີ້: ໃຕ້ຫ້ອງ "ຂໍ້ໃດໃນ ກຈກ ບົດ 7" ໃຫ້ຂຽນ 17-45. ໃຕ້ "ຄົນສຳຄັນ" ໃຫ້ຂຽນ "ໂມເຊ" ໃຕ້ "ປີໃດ" ໃຫ້ຂຽນ "1400 ກ.ຄ.ສ."

**17** ຍຸກສະໄໝທີສອງນີ້ ມີຊື່ວ່າ "ອົບພະຍົບຈາກເອຢິບ". ໃຫ້ທ່ານເບິ່ງແຜນທີ່ໜ້າ 149 ອີກ. ຕອນພະຄຳພີນີ້ທີ່ຊະເຕ ຟາໂນ ສະຫລູບເລື່ອງ ການອົບພະຍົບຈາກເອຢິບ ຍົກຊື່ບ່ອນໃດ? (ເລືອກສອງບ່ອນ)

ກ. _____ ອັດຊີເລຍ　　ງ. _____ ເອຢິບ

ຂ. _____ ບາບີໂລນ　　ຈ. _____ ຄາລີເລ

ຄ. _____ ຖິ່ນກັນດານ　　ສ. _____ ໂລມ

**18** ພະທຳໝວດໃດໃນພະຄຳພີເດີມ ກ່າວເລື່ອງການອົບພະຍົບນັ້ນ? (ເລືອກ)

ກ. _______ ພະທຳຍອດເພງ ເອຊາຢາ ແລະ ເຢເຣມີຢາ

ຂ. _______ ພະທຳອົບພະຍົບ ຈົດບັນຊີ ແລະ ພະບັນຍັດສອງ

ຄ. _______ ພະທຳເອເຊກຽນ ດານີເອນ ໂຮເຊອາ ແລະ ໂຢເອນ

ໃຫ້ທ່ານຂຽນຂ້າງເສັ້ນຂວາຈາກເລກ 2 ດັ່ງຕໍ່ໄປນີ້: ລຸ່ມຍຸກສະໄໝໃຫ້ຂຽນຄຳ "ອົບພະຍົບຈາກເອຢິບ". ລຸ່ມສະຖານທີ່ໃຫ້ຂຽນ "ເອຢິບ ແລະ ຖິ່ນກັນດານ". ລຸ່ມຫ້ອງຈາກພະທຳໃດໃນພະຄຳພີເດີມ ໃຫ້ຂຽນ "ພະທຳອົບພະຍົບ ຈົດບັນຊີ ແລະພະບັນຍັດສອງ".

**19** ມາເຖິງນີ້ເຮົາຮຽນເລື່ອງສອງສະໄໝແລ້ວ:

ກ. ຍຸກທຳອິດຄືຍຸກໃດ? __________ ໃຜສຳຄັນ? __________________________ __________________________ ແລະ __________________ ປະມານປີໃດ? ________

ຂ. ທີສອງຍຸກໃດ? ______________ ໃຜສຳຄັນ? ______________ ປີໃດ? ________

**20** ການສະຫລູບຍຸກທີສາມຈາກປະຫວັດສາດຢິວ ຢູ່ໃນ ກຈກ 7:45-53. ຊະເຕຟາໂນກ່າວເລື່ອງຍຸກນັ້ນໃຫ້ສຳເລັດ ບໍ່ ໄດ້ເພາະປະຊາຊົນຈວນຈະຂ້າ ແຕ່ໃນຂໍ້ 45 ເພິ່ນຍັງຍົກຊື່ຜູ້ສຳຄັນສອງຄົນໃນຍຸກສະໄໝນັ້ນ.

ກ. ແມ່ນຄົນໃດທີ່ນຳພວກຊາດຢິວເຂົ້າຢຶດເອົາແຜ່ນດິນຂອງເຂົາ? __________________

ຂ. ກະສັດຂອງອິດສະລາເອນຄົນໃດທີ່ມີຊື່ສຽງ? ________________________________

ຄ. ກະສັດອົງນັ້ນຢູ່ປະມານປີໃດ? __________________________________________

ເຖິງວ່າຍຸກນີ້ເລີ້ມຕົ້ນກັບຢາໂຮຊູອາ ແລະຈົບລົງກັບບຸດດາວິດທີ່ຊື່ວ່າ ຊາໂລໂມນ ກໍຕາມ ແຕ່ເຮົາຈະຖືຜູ້ ສຳຄັນທີ່ສຸດໃນຍຸກສະໄໝນັ້ນເປັນກະສັດດາວິດ. ດັ່ງນັ້ນໃຫ້ທ່ານຂຽນຊື່ "ດາວິດ" ຂ້າງເລກ 3 ລຸ່ມຫ້ອງ "ຄົນສຳຄັນ" ແລະຂຽນ "1000 ກ.ຄ.ສ." ລຸ່ມຫ້ອງ "ປີໃດ" ໃນຕາຕະລາງ. ໃຫ້ຂຽນ "46-53" ລຸ່ມຫ້ອງ "ຈາກຂໍ້ໃດໃນ ກຈກ ບົດ 7".

**21** ກຈກ 7:47 ຍົກຊື່ກະສັດໃດທີ່ສ້າງພະວິຫານ?

____________________________________

*ໝາຍເຫດ: ຜູ້ທີ່ແປພະຄຳພີເດີມຈາກພາສາເດີມ ແລະຜູ້ທີ່ ແປພະຄຳພີໃໝ່ ສະກົດຊື່ແຕກຕ່າງກັນໄປ.*



**22** ກ. ໃນຍຸກສະໄໝນີ້ ປະເທດຂອງຊາວອິດສະລາເອນ ຕັ້ງໄວ້ໃນດິນໃດ? ______________

ຂ. ໝາຍໄວ້ດ້ວຍຕົວອັກສອນໃດໃນແຜນທີ່ໜ້າ 149? __________________________

ໃຫ້ຂຽນຄຳວ່າ "ປາແລັດສະຕິນ" ຂ້າງ ເລກ 3 ລຸ່ມຫ້ອງ "ສະຖານທີ່" ໃນຕາຕະລາງ.

**23** ຍຸກສະໄໝທີ 3 ນີ້ ສິ້ນສຸດລົງໃນເວລາກະສັດຊາໂລໂມນຕາຍ ໃນພະທຳປະຫວັດກະສັດທີໜຶ່ງ ບົດທີ 11. ຍຸກນີ້ເລີ້ມ ຕົ້ນກັບພະທຳໃດ? (ເບິ່ງສາລະບານໃນພະຄຳພີກໍໄດ້ ເພື່ອເຫັນວ່າ ພະທຳໃດຕົກຫຼັງຈາກ ພະບັນຍັດທີສອງ) ____________________________________

*ໝາຍເຫດ: "ໂຢຊວຍ"ໃນຄຳແປ ພະຄຳພີເດີມເປັນອັນດຽວກັນກັບ"ຢາໂຮຊູອາ" ໃນຄຳແປ ພະຄຳພີໃໝ່.*

| |
|---|
| ໃຫ້ຂຽນ "ຈາກໂຢຊວຍເຖິງປະຫວັດກະສັດທີໜຶ່ງ" ໃສ່ໃນຕາຕະລາງ ຂ້າງເລກ 3 ລຸ່ມ ຫ້ອງທີ່ວ່າດ້ວຍພະທຳໃນພະຄຳພີເດີມ. |

**24** ພະທຳຊາມູເອນທີໜຶ່ງ ຊາມູເອນທີສອງ ແລະປະຫວັດກະສັດທີໜຶ່ງເຖິງບົດທີ 11 ກ່າວເລື່ອງ ການປົກຄອງຂອງກະ ສັດດາວິດ ແລະຊາໂລໂມນເຖິງທີ່ຊາໂລໂມນສິ້ນພະຊົນ. ຍຸກສະໄໝທີ 3 ນີ້ເລີ້ມຕົ້ນກັບໂຢຊວຍ ແລະຈົບລົງກັບ ຊາ ໂລໂມນ ແຕ່ຜູ້ສຳຄັນຄົນໜຶ່ງໃນຍຸກນັ້ນຄືໃຜ?

______________________________________________________________

| |
|---|
| ຍຸກສະໄໝນີ້ຈະເອີ້ນວ່າ "ຊາວຢິວຕັ້ງປະເທດ" ໃຫ້ຂຽນໃສ່ຫ້ອງໃນຕາຕະລາງຂ້າງ ເລກ 3 ຕາມເຄີຍ. |

**25** ເຮົາຮຽນເລື່ອງ 3 ຍຸກສະໄໝໃນພະຄຳພີເດີມແລ້ວ.

ກ. ຍຸກທີໜຶ່ງຄືຍຸກໃດ? ____________________________________________

ຜູ້ໃດເປັນຄົນສຳຄັນ? ______________________ ແລະ _______ ປີໃດ? _____

ຂ. ທີສອງຄືຍຸກໃດ? ______________________________________________

ຜູ້ໃດສຳຄັນ? __________________________________ ປະມານປີໃດ? _____

ຄ. ຍຸກທີສາມຍຸກໃດ? ____________________________________________

ກະສັດໃດສຳຄັນ? __________________________________ ປີໃດ? ______

**26** ຄຳກ່າວຂອງຊະເຕຟາໂນສິ້ນສຸດລົງກັບຂໍ້ 53 ພວກທີ່ຈະຂ້າຊະເຕຟາໂນຫາວ່າເພິ່ນກ່າວຕໍ່ ສູ້ຫຍັງ? (ກຈກ 6:13)

ກ. ____________________________________________________________

ຂ. ____________________________________________________________

**27** ເຂົາຫາຄວາມຢ່າງນັ້ນເພາະເຂົາເອງເຂົ້າໃຈຜິດເລື່ອງພະວິຫານ ເຂົາມັກຖືວ່າພະເຈົ້າສະຖິດ ໃນພະວິຫານແຕ່ບ່ອນ ດຽວນັ້ນ ຖືວ່າພະເຈົ້າຢູ່ແຕ່ສະເພາະເພື່ອຄົນຢິວ. ໃນສາຍຕາຂອງເຂົາຄືວ່າ ຊະເຕຟາໂນບໍ່ນັບຖືພະວິຫານ ຊະເຕຟາ ໂນຍົກຫຼັກຈາກໃນປະຫວັດສາດຢິວວ່າ ພະເຈົ້າບໍ່ໄດ້ຢູ່ແຕ່ໃນບ່ອນດຽວນັ້ນ. ໃນ ກຈກ ບົດທີ 7 ເພິ່ນອ້າງເຖິງສະຖານ ທີ່ຫຼາຍແຫ່ງທີ່ເຫັນອຳນາດຂອງພະເຈົ້າປາກົດມາ ບໍ່ແມ່ນພຽງແຕ່ໃນປາແລັດສະຕິນ.

ກ. ໃນ ກຈກ 7:2 ພະເຈົ້າປາກົດແກ່ອັບລາຮາມໃນສອງບ່ອນໃດ?

_______________________________ ແລະ ____________________________

ຂ. ໃນ ກຈກ 7:9 ເຫັນພະເຈົ້າສະຖິດຢູ່ບ່ອນໃດ? ______________________________

ຄ. ໃນ ກຈກ 7:30 ໃນປ່າໃດ? _____________________________________________

ງ. ໃນ ກຈກ 7:36 ເດ? _____________________________ ແລະ ______________

ຈ. ໃນ ກຈກ 7:38 ຢູ່ພູໃດ? ______________________________________________

**28** ໃນລາຍຊື່ສະຖານທີ່ຕໍ່ໄປນີ້ ໃຫ້ທ່ານໝາຍໄວ້ແຕ່ບ່ອນທີ່ພະເຈົ້າປາກົດມາໃນປະເທດປາແລັດສະຕິນ.

ກ. _______ ປ່າ

ຂ. _______ ເອຢິບ

ຄ. _______ ຂາລານ

ງ. _______ ເມໂຊໂປຕາເມຍ

ຈ. _______ ພູຊີນາຍ

ສ. _______ ທະເລແດງ

**29** ກ. ຊະເຕຟາໂນຍົກສະຖານທີ່ຊຶ່ງພະເຈົ້າປາກົດມາຫຼາຍແຫ່ງໃນ ກິດຈະການ ບົດທີ 7 ນັ້ນ. ເພິ່ນຍົກເລື່ອງການຊົງປາ ກົດມາໃນປາແລັດສະຕິນບໍ່? ________________________

ຂ. ສະແດງວ່າຢ່າງໃດ? (ເລືອກ)

______ ພະເຈົ້າຢູ່ແຕ່ບ່ອນດຽວຢ່າງຈຳກັດ

______ ພະເຈົ້າບໍ່ຈຳກັດໃນສະຖານທີ່

______ ພະເຈົ້າຢູ່ແຕ່ໃນປະເທດປາແລັດສະຕິນ

**30** ກ. ຊະເຕຟາໂນກ່າວເຖິງຫຼາຍໂອກາດທີ່ພະເຈົ້າປາກົດມາ ນອກຈາກປາແລັດສະຕິນ. ໂອກາດທີ່ເພິ່ນຍົກມາ ຕົກ ກ່ອນກະສັດຊາໂລໂມນສ້າງພະວິຫານ ຫຼືທີຫຼັງ? _______________

ຂ. ສະແດງວ່າຢ່າງໃດ? (ເລືອກ)

______ ພະເຈົ້າປາກົດມາບ່ອນໃດກໍໄດ້

______ ພະເຈົ້າປາກົດມາແຕ່ສະເພາະໃນບ່ອນທີ່ສັກສິດ

______ ພະເຈົ້າຕ້ອງການພະວິຫານຈຶ່ງຈະປາກົດມາໄດ້

**31** ເຖິງບໍ່ມີພະວິຫານກໍຕາມ ແຕ່ພະເຈົ້າສາມາດປາກົດຕົວໄດ້. ຄືວ່າພະເຈົ້າບໍ່ຈຳກັດໃນດ້ານໃດ?

____________________________________________________________________

**32** ກ. ໃຫ້ອ່ານ ກຈກ 7:47-48. ພະເຈົ້າຢູ່ແຕ່ໃນບ່ອນທີ່ມະນຸດສ້າງບໍ່? ________________

ຂ. ຕາມທີ່ເຮົາຮຽນມາໃນບົດທີ 9 ຂອງຫຼັກສູດນີ້ ພະວິນຍານຂອງພະເຈົ້າສະຖິດຢູ່ກັບໃຜແລ້ວ? ____________________________________________________________

**33** ກ. ຄຳກ່າວຂອງຊະເຕຟາໂນ ພິສູດວ່າຢ່າງໃດ? ______________________________

ຂ. ໝາຍຄວາມວ່າຢ່າງໃດ? (ເລືອກ)

______ ພະວິຫານເປັນສິ່ງສຳຄັນທີ່ສຸດໃນສາດສະໜາ

______ ສິ່ງສຳຄັນທີ່ສຸດບໍ່ແມ່ນພະວິຫານ

**34** ທີ່ເຂົາກ່າວຫາວ່າຊະເຕຟາໂນຕໍ່ສູ້ພະວິຫານນັ້ນ ຊະເຕຟາໂນຕອບໂດຍພິສູດຫຍັງ? ______

______________________________________________________________

**35** ກ. ນອກຈາກທີ່ຊະເຕຟາໂນຕໍ່ສູ້ພະວິຫານ ເຂົາກ່າວຫາຢ່າງໃດອີກ? ________________

ຂ. ຜູ້ທີ່ຈະກ່າວຫາຢ່າງນັ້ນ ຄວນເປັນຄົນຢ່າງໃດ? (ເລືອກ)

______ ຄົນທີ່ຖືພະບັນຍັດຢ່າງສັດຊື່

______ ຄົນທີ່ບໍ່ຫ່ວງເລື່ອງພະບັນຍັດ

______ ຄົນທີ່ບໍ່ຮູ້ພະບັນຍັດ



**36** ຊະເຕຟາໂນເຕືອນໃຈໃຫ້ເຂົາຈື່ເລື່ອງວ່າບັນພະບຸລຸດຂອງເຂົາບໍ່ໄດ້ເຊື່ອຟັງໂມເຊແລະບໍ່ໄດ້ຖື ພະບັນຍັດຊ້ຳ.

ກ. ໃຫ້ອ່ານ ກຈກ 7:25-28. ເຂົາເຮັດຫຍັງຕໍ່ໂມເຊ? (ເລືອກ)

______ ເຂົານັບຖືໂມເຊ

______ ເຂົາເຊື່ອຟັງໂມເຊ

______ ບໍ່ຍອມຮັບຟັງໂມເຊ

ຂ. ໃຫ້ອ່ານ ກຈກ 7:38-41 ເຂົາກະທຳຕອບໂມເຊ ຢ່າງໃດ? (ເລືອກ 3 ປະການ)

______ ເຂົາຕິດຕາມໂມເຊຢ່າງຊື່ສັດ

______ ບໍ່ຍອມເຊື່ອຟັງ

______ ເຮັດຕາມຄຳສັ່ງຂອງໂມເຊ

______ ຖິ້ມຄຳສອນຂອງໂມເຊເສຍ

______ ເມື່ອໂມເຊບໍ່ຢູ່ ເຂົາສ້າງຮູບງົວເພື່ອບູຊາ

______ ເມື່ອໂມເຊບໍ່ຢູ່ ເຂົາຍັງນັບຖືພະເຈົ້າຢູ່



ຄ. ຕາມໃນ ກຈທ 7:52 ພວກບັນພະບຸລຸດຢິວເຮັດຢ່າງໃດກັບບັນດາຜູ້ປະກາດພະທຳ? ___

ງ. ເຂົາເຮັດຫຍັງກັບຜູ້ປະກາດລ່ວງໜ້າ ເລື່ອງການສະເດັດມາຂອງອົງຜູ້ຊອບທຳ? _______

ຈ. ສ່ວນພວກຢິວທີ່ຫາວ່າ ຊະເຕຟາໂນກ່າວຄຳຕໍ່ສູ້ພະບັນຍັດ ເຂົາເອງຖືພະບັນຍັດບໍ່? ___

**37** ພວກຄົນຢິວເອງ ເຄີຍມີທ່າທີໃດຕໍ່ໂມເຊແລະພະບັນຍັດ? (ເລືອກ)

______ ເຂົານັບຖືຢ່າງສູງ ______ ເຂົາເອງບໍ່ນັບຖື ______ ເຂົາເຊື່ອຟັງຢ່າງໝັ້ນຄົງ

**38** ຖ້າພວກຢິວເອງບໍ່ໄດ້ນັບຖືໂມເຊແລະພະບັນຍັດ ເປັນການເໝາະສົມທີ່ເຂົາຈະຕິວ່າຊະເຕຟາໂນບໍ່ນັບຖືບໍ່? ________________________________________________

**39** ເມື່ອເຂົາຫາວ່າຊະເຕຟາໂນຕໍ່ສູ້ພະບັນຍັດ ເພິ່ນຊີ້ບອກວ່າເຂົາບໍ່ມີສິດຫາຄວາມຢ່າງນັ້ນ ເພາະເຂົາເອງບໍ່ນັບຖື ໃຜ? ____________________________________________

**40** ກ. ທີ່ເຂົາຫາວ່າເພິ່ນຕໍ່ສູ້ພະວິຫານ ຊະເຕຟາໂນຕອບວ່າຢ່າງໃດ? ________________

________________________________________________________________

ຂ. ທີ່ເຂົາຫາຄວາມວ່າ ເພິ່ນຕໍ່ສູ້ພະບັນຍັດຂອງໂມເຊ ເພິ່ນຕອບຢ່າງໃດ? ____________

________________________________________________________________

*ບົດນີ້ຍາວຫຼາຍ ຖ້າທ່ານຢາກພັກຜ່ອນຄາວໜຶ່ງ ພັກໃນບ່ອນນີ້ກໍໄດ້.*

**41** ຊະເຕຟາໂນ ສະຫລູບເລື່ອງປະຫວັດສາດຢິວ ມາເຖິງຍຸກສະໄໝທີ 3 ແຕ່ເພິ່ນກ່າວໃຫ້ສຸດບໍ່ໄດ້ເພາະພວກຢິວນັ້ນ ຄວ່າງຫີນໃສ່. ເພິ່ນສະຫລູບເລື່ອງທີ 4, 5, ແລະ 6 ບໍ່ໄດ້ ດັ່ງນັ້ນເລື່ອງຕໍ່ໄປເຮົາຈະຮຽນເອົາເອງ. ຫຼັງຈາກກະສັດໂຊໂລໂມນຕາຍແລ້ວ ພວກຢິວເປັນຢ່າງໃດ? (ເລືອກ)

ກ. ຍັງເປັນອານາຈັກດຽວຄືແຕ່ກ່ອນ

ຂ. ເຂົາຮວມກັບຕ່າງປະເທດ

ຄ. ພວກຢິວແບ່ງເປັນສອງອານາຈັກ

**42** ກ. ແບ່ງເປັນສອງອານາຈັກໃດ? ____________________ ແລະ ________________

ຂ. ອານາຈັກໃດມີ 10 ຕະກຸນ? ________________________________________

ຄ. ອານາຈັກໃດມີ 2 ຕະກຸນ? _________________________________________

ງ. ອານາຈັກໃດຢູ່ທາງເໜືອ? _________________________________________

ຈ. ອານາຈັກໃດຢູ່ທາງໃຕ້? __________________________________________

ສ. ນະຄອນຫຼວງຂອງອານາຈັກເໜືອຢູ່ໃສ? ________________________________

ຊ. ນະຄອນຫຼວງຂອງອານາຈັກໃຕ້ເດ? ___________________________________

ຍ. ທັງສອງອານາຈັກນັ້ນຢູ່ໃນສະຖານທີ່ໃດ? ______________________________

| |
|---|
| ໃຫ້ຂຽນຄຳ "ອານາຈັກແບ່ງ" ຂ້າງເລກ 4 ລຸ່ມຫ້ອງ ຍຸກສະໄໝ ແລະ ຂຽນຄຳວ່າ "ປາແລັດສະຕິນ" ລຸ່ມຫ້ອງສະຖານທີ່. (ໃນຕາຕະລາງ) |

**43** ຍຸກສະໄໝທີ 3 ສິ້ນສຸດໃນ ພະທຳປະຫວັດກະສັດທີໜຶ່ງບົດໃດ? ___________________

**44** ຖ້າຢ່າງນັ້ນ ຍຸກທີ 4 ຈະເລີ້ມຕົ້ນກັບບົດໃດ? _________________________________

| |
|---|
| ຍຸກອານາຈັກແບ່ງ ເລີ້ມຕົ້ນກັບ ປະຫວັດກະສັດທີໜຶ່ງ ບົດທີ 12 ແລະ ຈົບລົງໃນບົດສຸດທ້າຍຂອງພະທຳກະສັດທີສອງ. ໃຫ້ທ່ານຂຽນ "1 ກສ 12 ເຖິງສຸດ 2 ກສ" ໃນຕາຕະລາງຂ້າງເລກ 4 ຫ້ອງຂວາສຸດ. |

**45** ເຫັນມີຄົນສຳຄັນຫຼາຍຄົນໃນຍຸກທີ 4 ນີ້. ມີກະສັດຫຼາຍອົງ ມີຜູ້ປະກາດພະທຳຫຼາຍຄົນ ແຕ່ເຮົາຈະຍົກແຕ່ຊື່ຂອງຜູ້ ປະ ກາດພະທຳຄົນດຽວ. ຜູ້ປະກາດພະທຳຄົນໃດຢູ່ໃນປີ 700 ກຄສ?

_______________________________________________________________

| |
|---|
| ໃຫ້ຂຽນ "ເອຊາຢາ" ຂ້າງເລກ 4 ລຸ່ມຫ້ອງຄົນສຳຄັນ ແລະ "700 ກຄສ" ລຸ່ມຫ້ອງປີໃດ. |

**46** ໃຫ້ຮຽນຄືນກັນເທາະ!

ກ. ຍຸກທີ 3 ຄືຍຸກໃດ? ________________ ຄົນສຳຄັນຄືໃຜ? _________ ປີໃດ? ____

ຂ. ຍຸກທີ 4 ຄືຍຸກໃດ? ________________ ຄົນສຳຄັນຄືໃຜ? _________ ປີໃດ? ____

**47** ຍຸກທີ 5 ຄື ການເນລະເທດ. ເຮົາເຄີຍຮຽນມາເລື່ອງການເນລະເທດນີ້ມາກ່ອນ

ກ. ເຂົາຖືກເນລະເທດໄປໃນປີໃດ? (ກະປະມານ) ____________________________

ຂ. ຖືກເນລະເທດໄປໃສ? ___________________________________________

(ໃຫ້ທ່ານເປີດເບິ່ງແຜນທີ່ໜ້າ 149. ບາບີໂລນຢູ່ໃນແຜ່ນດິນຂອງຊາວຂາລະເດຍ)

| |
|---|
| ໃຫ້ທ່ານເປີດຕາຕະລາງອີກ ແລ້ວຂຽນຄຳ "ການເນລະເທດ" ຂ້າງເລກ 5 ລຸ່ມຍຸກສະໄໝ ໃຫ້ຂຽນ "600 ກຄສ" ລຸ່ມປີ ແລະຂຽນ ຄຳ "ບາບີໂລນ" ລຸ່ມຫ້ອງສະຖານ ທີ່. |

**48** ໃນພວກຄົນທີ່ຖືກເນລະເທດໄປບາບີໂລນ ມີຄົນໄວໜຸ່ມຄົນໜຶ່ງທີ່ຈະກາຍເປັນຜູ້ປະກາດພະທຳ. ມີກະສັດໃນບາບີ ໂລນອົງໜຶ່ງທີ່ຕັ້ງໃຈວ່າຈະຂ້າໂຍນເພິ່ນເຂົ້າໄປໃນຖ້ຳສິງ ແຕ່ພະເຈົ້າໃຫ້ເພິ່ນໄດ້ລອດ. ຕໍ່ໄປເພິ່ນມີອິດທິພົນຫຼາຍຕໍ່ໜ້າ ກະສັດຫຼາຍອົງ. ຜູ້ປະກາດພະທຳນັ້ນຄືໃຜ?

_______________________________________________________________

**49** ພະທຳເຢເຣມີຢາ ຕະຫຼອດເຖິງພະທຳດານີເອນ ກົງກັບສະໄໝເນລະເທດນີ້. ພະທຳໃດຈະກ່າວເລື່ອງຜູ້ປະກາດພະ ທຳ ດານີເອນເປັນຕົ້ນ? ____________________________

| |
|---|
| ໃຫ້ຂຽນ "ດານີເອນ" ຂ້າງເລກ 5 ລຸ່ມຫ້ອງຄົນສຳຄັນ ແລະ ຂຽນຄຳ "ເຢເຣມີຢາ ເຖິງ ດານີເອນ" ໃສ່ຫ້ອງຂວາສຸດເສັ້ນນັ້ນ. |

**50** ຈະຮຽນຄືນເລື່ອງ ຍຸກທີ 4 ແລະທີ 5.

ກ. ຍຸກທີ 4 ຄືຍຸກໃດ? ______________ ຄົນສຳຄັນຄືໃຜ? _________ ປີໃດ? _____

ຂ. ຍຸກທີ 5 ຍຸກໃດ? ______________ ໃຜເປັນຄົນສຳຄັນ? ________ ປີໃດ? _____

**51** ຍຸກທີ 6 ຄື ການກັບຄືນ. ພວກເນລະເທດກັບຄືນເຖິງບ່ອນໃດ? ____________________

| |
|---|
| ໃຫ້ເປີດເບິ່ງຕາຕະລາງອີກ ແລ້ວຂຽນຄຳ "ການກັບຄືນ" ຂ້າງເລກ 6 ລຸ່ມຫ້ອງສະໄໝ ແລະຂຽນຄຳວ່າ "ປາແລັດສະຕິນ" ລຸ່ມສະຖານທີ່. |

**52** ພວກຄົນຢິວບໍ່ໄດ້ກັບຄືນມາໃນເວລາບາດດຽວ. ເຂົາກັບມາເທື່ອລະເລັກລະນ້ອຍ, ອາດຈະຜ່ານຫຼາຍສິບປີກ່ອນຈະ ສຳ ເລັດ. ໃນຫຼັກສູດມັດທາຍ ເຫຼັ້ມ 4 ບົດທີ 18 ເຫັນວ່າເຂົາເລີ້ມຕົ້ນກັບມາປະມານ 70 ປີ ຫຼັງຈາກຖືກເນລະເທດໄປ. ຖ້າ ຢ່າງນັ້ນ ເຂົາເລີ້ມມາປີໃດ?

(600 ກຄສ ລົບອອກ 70) ________________________________________

| |
|---|
| ໃຫ້ຂຽນ "530 ກຄສ" ຂ້າງເລກ 6 ລຸ່ມຫ້ອງປີ. |

**53** ເບິ່ງຄືບໍ່ມີບຸກຄົນໃດທີ່ສຳຄັນກວ່າໝູ່ໃນຍຸກນີ້. ມີແຕ່ພະທຳສອງເຫຼັ້ມທີ່ບັນທຶກເລື່ອງຄື ເອັດຊະລາ ແລະເນເຫມີ. ພະ ທຳໃດກ່າວເຖິງການກັບມາຈາກການເນລະເທດໃນບາບີໂລນ?

____________________________ ແລະ ____________________________

| |
|---|
| ໃຫ້ທ່ານຂຽນຄຳ "ເອັດຊະລາ ແລະ ເນເຫມີ" ໃສ່ຫ້ອງສຸດທ້າຍຂ້າງຂວາເສັ້ນ ນັ້ນ ໃນຍຸກທີ 6. |

**54** ຮຽນຄືນຍຸກ 4, 5, ແລະ 6.

ກ. ຍຸກໃດເປັນທີ 4? ______________ ໃຜສຳຄັນ? __________ ປີໃດ? _______

ຂ. ຍຸກໃດທີ 5? _________________ ໃຜສຳຄັນ? __________ ປີໃດ? _______

ຄ. ຍຸກໃດທີ 6? ____________________________________ ປີໃດ? ________

**55** ລະຫວ່າງພະທຳເຫຼັ້ມສຸດທ້າຍໃນພະຄຳພີເດີມເຖິງເຫຼັ້ມທຳອິດໃນພະຄຳພີໃໝ່ມີຂ່າວຫຼາຍຮ້ອຍປີທີ່ບໍ່ມີຜູ້ປະກາດ ພະທຳ.

ກ. ເຫຼັ້ມສຸດທ້າຍໃນພະຄຳພີເດີມ ຄືເຫຼັ້ມໃດ? ____________________________

ຂ. ເຫຼັ້ມທຳອິດໃນພະຄຳພີໃໝ່ເດ? ________________________________

**56** ເພື່ອຈະຮຽນຄືນທັງ 6 ສະໄໝໃນປະຫວັດສາດຢິວຈາກພະຄຳພີເດີມ. ໃຫ້ທ່ານຕື່ມຄວາມທີ່ຂາດຕໍ່ໄປນີ້:

ທີ 1 ຍຸກບັນ ___________________ ອັບລາຮາມ ____________________________

_____________________ຢາໂຄບ __________________ສຳຄັນ 2000 ກຄສ

ທີ 2 ຍຸກ __________________ ________________________ສຳຄັນ ______ ກຄສ

ທີ 3 ຍຸກ ຊາວຢິວຕັ້ງປະເທດ _________________________ສຳຄັນ ______ ກຄສ

ທີ 4 ຍຸກ __________________ ເອຊາຢາ ສຳຄັນ ______ ກຄສ

ທີ 5 ຍຸກການ _______________ _______________________ ສຳຄັນ 600 ກຄສ

ທີ 6 ຍຸກການ ________________ (ບໍ່ມີບຸກຄົນໃດສຳຄັນກວ່າໝູ່) ______ ກຄສ

*ສະຫລູບເລື່ອງປະຫວັດສາດຢິວສຳເລັດແລ້ວ. ຈາກນີ້ໄປເຮົາຈະກັບໄປຮຽນເລື່ອງ ການຄວ່າງຫີນໃສ່ ຊະເຕຟາໂນໃຫ້ຕາຍ.*

**57** ໃຫ້ອ່ານ ກຈກ 7:54-60 ແລະ 8:1-2



ກ. ໃນເມື່ອຝູງຄົນນັ້ນຈວນຈະຂ້າຊະເຕຟາໂນ ເພິ່ນເງີຍໜ້າຂຶ້ນເບິ່ງໃຜ? ___________

________________________________

ຂ. ເຂົາເຮັດຢ່າງໃດຂ້າຊະເຕຟາໂນ? ______________________________________

______________________________________________________________

ຄ. ຜູ້ທີ່ຂ້າປົດເສື້ອໄວ້ໃກ້ຕີນຂອງໃຜ? ______________________________________

______________________________________________________________

**58** ໃນກຈກ 7:59 ຊະເຕຟາໂນເວົ້າຫຍັງ? ______________________________________

______________________________________________________________

**59** ໃນລູກາ 23:46 ຜູ້ໃດເວົ້າຄວາມທີ່ຄ້າຍຄືກັນ? ________________________________

**60** ຄວາມຕາຍຂອງຊະເຕຟາໂນສະແດງຢ່າງໃດ? (ເລືອກ)

ກ. _______ ທີ່ໄວ້ວາງໃຈໃນພະເຍຊູ

ຂ. _______ໝົດຫວັງ

ຄ. _______ ຢ້ານຕາຍ

**61** ກ. ຄຳສຸດທ້າຍຂອງຊະເຕຟາໂນ ໃນ ກຈກ 7:60 ເພິ່ນວ່າຢ່າງໃດ? __________________

______________________________________________________________

ຂ. ໃນ ລູກາ 23:34 ໃຜເວົ້າຄວາມຄ້າຍຄືກັນ? ________________________________

**62** ທ່າທີຂອງຊະເຕຟາໂນຕໍ່ຄົນທີ່ຈະຂ້ານັ້ນເປັນຢ່າງໃດ? (ເລືອກ)

ກ. _______ ເພິ່ນກຽດຊັງເຂົາ

ຂ. _______ ເພິ່ນຈະຍົກຜິດເຂົາ

ຄ. _______ ເພິ່ນຢາກແກ້ແຄ້ນ

**63** ກ. ໃນເມື່ອຊະເຕຟາໂນຈວນຈະຕາຍ ເພິ່ນຍັງໄວ້ວາງໃຈກັບໃຜ? __________________

ຂ. ເພິ່ນອະໄພໃຫ້ໃຜ? ________________________________________________

*ທີ່ຈິງ ຄວາມຕາຍຂອງຊະເຕຟາໂນບໍ່ແມ່ນເລື່ອງໂສກເສົ້າ. ໃນບົດຮຽນທີ 19 ຕໍ່ໄປນີ້ເຮົາຈະເຫັນວ່າພະອົງໃຫ້ເກີດມີຜົນຫຼາຍ.*

**64** ສະຫລູບເລື່ອງຊະເຕຟາໂນ!

ກ. ເຂົາກ່າວຫາເພິ່ນສອງຢ່າງໃດ? ____________________________________

____________________________________________________________

ຂ. ເພິ່ນຕອບເຂົາຢ່າງໃດເລື່ອງພະວິຫານ?___________________________________

ເລື່ອງພະບັນຍັດ? _____________________________________________

ຄ. ເມື່ອຊະເຕຟາໂນຈວນຈະຕາຍ ເພິ່ນມີທ່າທີໃດຕໍ່ພະເຈົ້າ? ____________________

ທ່າທີໃດຕໍ່ຄົນທີ່ຂ້າ? ____________________________________________

*ລົມຄວນທີ່ຈະສັນລະເສີນພະເຈົ້າ ວ່າພະອົງສາມາດເຮັດໃຫ້ທຸກສິ່ງເກີດມີຜົນ ເພື່ອຄົນທີ່ພະອົງຊົງເອີ້ນໄວ້. ແລະອີກ ເຮົາຄວນເອົາຊະເຕຟາໂນມາເປັນຕົວຢ່າງໃນການໄວ້ວາງໃຈກັບພະເຈົ້າ ແລະການອະໄພໃຫ້ຄົນ ທີ່ຢາກທຳລາຍເຮົາ.*

## *ຢ່າລືມບົດເສັງທີ 16!*

**ຄຳຕອບ:**

***1*** *ກ. ເຂົາແຈກທານໃຫ້ແມ່ໝ້າຍກະລິກບໍ່ພໍ ຂ. ເກີດໃນຕ່າງປະເທດ ຄ. ພວກສາວົກ ງ. ອ້ອນວອນ ແລະກ່າວພະທຳ ຈ. 7 ຄົນ ສ. ຜູ້ດູແລ*

***2*** *ກ. ອັດສະຈັນ ແລະ ໝາຍສຳຄັນ ຂ. ໂດດຈັບນຳໄປຫາສານສູງສຸດ ຄ. ສາດສະ ນາ ງ. ມະຫາປະໂລຫິດ ຈ. ບ່ອນສັກສິດ (ພະວິຫານ) ສ. ພະບັນຍັດ ຊ. ພະວິຫານ ຍ. ພະບັນຍັດ*

***3*** *ເປັນຜູ້ດູແລ*

***4*** *ກ. ຕໍ່ສູ້ພະວິຫານ ຂ. ຕໍ່ສູ້ພະບັນຍັດ (ຂອງໂມເຊ)*

***5*** *ກ. ພະກາຍຂອງພະອົງ ຂ. ການສິ້ນພະຊົນ ແລະການຄືນພະຊົນ*

***6*** *ຂ ຖືກ*

***7*** *ກ. ໂມເຊ ຂ. ບ່ອນສັກສິດ (ຄືພະວິຫານ)*

***8*** *ເປັນຜູ້ດູແລ*

**ຄຳຕອບ (ຕໍ່):**

**9** *ກ. ອັບລາຮາມ ຂ. ອີຊາກ ຄ. ຢາໂຄບ ງ. ອິດສະລາເອນ ຈ. ໂຢເຊັບ*

**10** *ບັນພະບຸລຸດ*

**11** *ຍຸກຂອງບັນພະບຸລຸດ*

**12** *ປຖກ*

**13** *2000 ກຄສ*

**14** *ກ. ຂາລານ; ຂ ຂ. ປາແລັດສະຕິນ; ປ ຄ. ເອຢິບ; ອ*

**15** *ກ. ບັນພະບຸລຸດ ຂ. ອັບລາຮາມ ອີຊາກ ຢາໂຄບ ແລະ ໂຢເຊັບ ຄ. 2000 ກຄສ*

**16** *ກ. ໂມເຊ ຂ. 1400 ກຄສ*

**17** *ຄ ງ ຖືກ*

**18** *ຂ ຖືກ*

**19** *ກ. ບັນພະບຸລຸດ; ອັບລາຮາມ ອີຊາກ ຢາໂຄບ ແລະ ໂຢເຊັບ; 2000 ກຄສ*
*ຂ. ອົບພະຍົບຈາກເອຢິບ; ໂມເຊ; 1400 ກຄສ*

**20** *ກ. ຢາໂຮຊູອາ (ໂຢຊວຍ) ຂ. ດາວິດ ຄ. 1000 ກຄສ*

**21** *ຊະໂລໂມນ*

**22** *ກ. ປາແລັດສະຕິນ ຂ. ອັກສອນ ປ*

**23** *ໂຢຊວຍ*

**24** *ດາວິດ*

**25** *ກ. ບັນພະບຸລຸດ; ອັບລາຮາມ ອີຊາກ ຢາໂຄບແລະໂຢເຊັບ; 2000 ກຄສ*
*ຂ. ອົບພະຍົບຈາກເອຢິບ; ໂມເຊ 1400 ກຄສ*
*ຄ. ຊາວຢິວຕັ້ງປະເທດ; ດາວິດ; 1000 ກຄສ*

**26** *ກ. ບ່ອນສັກສິດ (ພະວິຫານ) ຂ. ພະບັນຍັດ*

**27** *ກ. ປະເທດເມໂຊໂປຕາເມຍ ແລະ ເມືອງຂາລານ ຂ. ເອຢິບ ຄ. ຊີນາຍ*
*ງ. ເອຢິບ ທະເລແດງ ແລະ ໃນປ່າ ຈ. ຊີນາຍ*

**28** *(ບໍ່ມີຈັກບ່ອນໃນລາຍຊື່ນັ້ນທີ່ຢູ່ໃນປະເທດປາແລັດສະຕິນ)*

**29** *ກ. ບໍ່ ຂ. ພະເຈົ້າບໍ່ຈຳກັດໃນສະຖານທີ່*

**30** *ກ. ກ່ອນ ຂ. ພະເຈົ້າປາກົດມາບ່ອນໃດກໍໄດ້*

**31** *ສະຖານທີ່*

**32** *ກ. ບໍ່ ຂ. ຄົນທີ່ເຊື່ອໃນພະອົງ*

**33** *ກ. ພະເຈົ້າບໍ່ຈຳກັດໄວ້ກັບສະຖານທີ່ (ເຖິງຈະເປັນພະວິຫານກໍຕາມ)*
*ຂ. ສິ່ງສຳຄັນທີ່ສຸດບໍ່ແມ່ນພະວິຫານ*

**34** *ພິສູດວ່າ ພະເຈົ້າບໍ່ໄດ້ຈຳກັດຢູ່ກັບສະຖານທີ່ດຽວນັ້ນ. (ຄຳຄ້າຍຄືກໍໄດ້)*

**35** *ກ. ຫາວ່າຕໍ່ສູ້ພະບັນຍັດ ຂ. ຄົນທີ່ຖືພະບັນຍັດຢ່າງຊື່ສັດ*

**ຄຳຕອບ (ຕໍ່):**

**36** *ກ. ບໍ່ຍອມຮັບຟັງໂມເຊ*
*ຂ. ບໍ່ຍອມເຊື່ອຟັງ ຖິ້ມຄຳສອນຂອງໂມເຊເສຍ ເມື່ອໂມເຊບໍ່ຢູ່ ເຂົາສ້າງຮູບງົວເພື່ອບູຊາ*
*ຄ. ຂຶ້ນເທັງ ງ. ຂ້າ ຈ. ບໍ່*

**37** *ເຂົາເອງບໍ່ນັບຖື*

**38** *ບໍ່ເໝາະ*

**39** *ໂມເຊ*

**40** *ກ. ພະເຈົາບໍ່ຈຳກັດໄວ້ ໃນພະວິຫານບ່ອນດຽວ*
*ຂ. ເຂົາເອງບໍ່ໄດ້ຖືພະບັນຍັດຂອງໂມເຊ*

**41** *ຄ ຖືກ*

**42** *ກ. ອິດສະລາເອນ ແລະຢູດາ ຂ. ອິດສະລາເອນ ຄ. ຢູດາ ງ. ອິດສະລາເອນ*
*ຈ. ຢູດາ ສ. ຊາມາເລຍ ຊ. ເຢລູຊາເລັມ ຍ. ປາແລັດສະຕິນ*

**43** *ບົດ 11*

**44** *ກະສັດທີໜຶ່ງ ບົດ 12*

**45** *ເອຊາຢາ*

**46** *ກ. ຊາວຢິວຕັ້ງປະເທດ; ດາວິດ; 1000 ກຄສ*
*ຂ. ອານາຈັກແບ່ງ; ເອຊາຢາ; 700 ກຄສ*

**47** *ກ. 600 ກຄສ ຂ. ບາບີໂລນ*

**48** *ດານີເອນ*

**49** *ພະທຳດານີເອນ*

**50** *ກ. ອານາຈັກແບ່ງ; ເອຊາຢາ; 700 ກຄສ*
*ຂ. ການເນລະເທດ; ດານີເອນ; 600 ກຄສ*

**51** *ປາແລັດສະຕິນ (ຢູດາກໍໄດ້)*

**52** *530 ກຄສ*

**53** *ເອັດຊະລາ ແລະ ເນເຫມີ*

**54** *ກ. ອານາຈັກແບ່ງ ເອຊາຢາ 700 ກຄສ ຂ. ການເນລະເທດ ດານີເອນ 600 ກຄສ*
*ຄ. ການກັບຄືນ 530 ກຄສ*

**55** *ກ. ມາລາກີ ຂ. ມັດທາຍ*

**ຄຳຕອບ (ຕໍ່):**

**56** *ທີ 1 ພະບຸລຸດ ອີຊາກ... ໂຢເຊັບ;*
*ທີ 2 ອົບພະຍົບຈາກເອຢິບ ໂມເຊ 1400 ກຄສ*
*ທີ 3 ດາວິດ 1000 ກຄສ*
*ທີ 4 ອານາຈັກແບ່ງ 700 ກຄສ*
*ທີ 5 ເນລະເທດ ດານີເອນ*
*ທີ 6 ກັບຄືນ 530 ກຄສ*

**57** *ກ. ເຫັນພະເຢຊູຢືນຢູ່ກຳ້ຂວາຂອງພະອົງ ຂ. ຄວ່າງຫີນໃຫ້ຕາຍ ຄ. ໂຊໂລ (ໂປໂລ)*

**58** *"ຂ້າແດ່ພະເຢຊູເຈົາ ຂໍຊົງໂຜດຮັບເອົາຈິດວິນຍານຂອງຂ້າພະອົງໄວ້ເທີ້ນ"*

**59** *ພະເຢຊູ*

**60** *ກ ຖືກ*

**61** *ກ. "ຂ້າແດ່ອົງພະຜູ້ເປັນເຈົາ ຂໍໂຜດຢ່າຊົງຖືໂທດເຂົາເພາະບາບນີ້" ຂ. ພະເຢຊູ*

**62** *ຂ ຖືກ*

**63** *ກ. ພະອົງ ຂ. ຄົນທີ່ຂ້າ*

**64** *ກ. ເພິ່ນຕໍ່ສູ້ພະວິຫານ ຕໍ່ສູ້ພະບັນຍັດຂອງໂມເຊ*
*ຂ. ພະເຈົາບໍ່ຈຳກັດໄວ້ກັບສະຖານທີ່ ເຂົາເອງບໍ່ນັບຖືພະບັນຍັດ*
*ຄ. ໄວ້ວາງໃຈ ຍົກຜິດເຂົາ*